The Project is Funded by
the European Union

## NUTRITION TRAINING AND FUNDING OPPORTUNITY FOR NON-PROFIT ASSOCIATIONS (NPAs)

SUN-CSA, in partnership with MHP, PFHA and Plan International, are announcing a training and funding opportunity for Lao NPAs working on nutrition. This exciting opportunity supports the Government of Lao PDR's National Nutrition Strategy and Plan of Action, and is being funded by the European Union and Plan Germany under the Capacity Building for Action on Nutrition project.

There will be 2 trainings open to NPAs: **a nutrition tools training in February/March 2018, and a proposal writing training in April 2018**. There will also be 5 nutrition grants of up to 290,000,000 Kip awarded to NPAs to conduct nutrition activities at the community level over 18 months.

**Applications for the trainings close on 30 January 2018. Your organisation must attend both trainings to apply for the small grant activity.**

### WHAT ARE THE TRAININGS ABOUT?

There will be two trainings as part of this support for SUN-CSA members.

**Nutrition Tools Training:** The first will be about nutrition tools that can be used by NPAs to improve community level skills in nutrition, including for health and agriculture.

**Proposal writing training:** This will focus on how to write a proposal for a nutrition-related activity. It will specificall focus on writing a proposal for the nutrition action grant fund in the project.

**Note:** To attend this proposal writing training, your organisation must attend the Nutrition Tool Training first.

Costs to attend the two trainings will be paid by SUN-CSA, with funding from the EU and Plan International.

### WHAT ARE THE NUTRITION ACTION GRANTS FOR?

The nutrition action grants are for NPAs to implement activities using the nutrition tools they learnt at the trainings in their communities. This can be in any nutrition sector, including agriculture, health or education. The activities must be conducted in partnership with local government, and use the tools from the trainings to further the goals of the National Nutrition Strategy and 22 National Nutrition Priorities.

### WHO CAN APPLY?

This funding is targeting NPAs who are working on nutrition-related activities, either directly or indirectly. Your organisation must be a member of SUN-CSA to join. If you are not already a member, you can apply online at the SUN CSA website: www.suncsalaos.org/ or send an email to: info@suncsalaos.org

### HOW CAN MY NPA APPLY?

To apply for the trainings, your organisation must submit an application form to SUN-CSA **before 30 January 2018**. NPAs who attend both trainings will be eligible to submit an application for a nutrition action grant funding in May 2018.

**For more information, contact SUN-CSA at:** info@suncsalaos.org or call 021 353 409 – ext 109.

The Project is Funded by
the European Union



## ໂອກາດໃນການຝຶກອົບຮົມ ແລະ ການຮັບທຶນສົ່ງເສີມວຽກງານໂພຊະນາການ ສຳລັບສະມາຄົມທີ່ບໍ່ຫວັງຜົນກຳໄລ (NPAs)

SUN-CSA ຮ່ວມມືກັບ MHP, PFHA ແລະ ອົງການແພລນສາກົນ ກຳລັງປະກາດການຝຶກອົບຮົມ ແລະ ການສະໜອງທຶນໃຫ້ກັບສະມາຄົມທີ່ບໍ່ຫວັງຜົນກຳໄລ (NPA) ທີ່ສົນໃຈວຽກງານດ້ານໂພຊະນາການ. ໂຄງການນີ້ແມ່ນເພື່ອສົ່ງເສີມແຜນຍຸດທະສາດແຫ່ງຊາດ ດ້ານໂພຊະນາການ ຂອງລັດຖະບານລາວ. ໂຄງການນີ້ໄດ້ຮັບການສະໜອງທຶນຊ່ວຍເຫຼືອຈາກ ສະຫະພາບເອີຣົບ ແລະ ອົງການແພລນເຢຍລະມັນ ເພື່ອຈັດຕັ້ງປະຕິບັດໂຄງການສ້າງຄວາມອາດສາມາດດ້ານໂພຊະນາການ.

ກິດຈະກຳຈະມີການອົບຮົມ ເປີດກວ້າງ 2 ຄັ້ງ ໃຫ້ກັບສະມາຄົມຕ່າງໆ: ຊຸດທີ 1 ແມ່ນການອົບຮົມກ່ຽວກັບເຄື່ອງມືດ້ານໂພຊະນາການ ໃນລະຫວ່າງ ທ້າຍເດືອນກຸມພາ ຫາ ເດືອນມີນາ 2018 ແລະ ຊຸດທີ 2 ການອົບຮົມການຂຽນບົດສະເໜີໂຄງການ ໃນເດືອນເມສາ 2018. ນອກຈາກນີ້ ໂຄງການຍັງຈະສະໜອງທຶນ ໃຫ້ກັບ 5 ສະມາຄົມ ເປັນຈຳນວນເງິນສູງສຸດ 290,000,000 ກີບ (ສອງຮ້ອຍເກົ້າສິບລ້ານກີບ ຕໍ່ສະມາຄົມ) ໃຫ້ກັບສະມາຄົມທີ່ໄດ້ຮັບການຄັດເລືອກ ໃນການຈັດຕັ້ງປະຕິບັດກິດຈະກຳ ດ້ານໂພຊະນາການ ຢູ່ໃນຂັ້ນຊຸມຊົນເປັນເວລາ 18 ເດືອນ.

**ປິດຮັບສະໝັກໃນການຝຶກອົບຮົມໃນວັນທີ 30 ທັງກອນ 2018 ແລະ ສະມາຄົມຂອງທ່ານ ຕ້ອງຜ່ານການຝຶກອົບຮົມທັງສອງ ເພື່ອສະໝັກເອົາທຶນສະໜັບສະໜູນ ການປະຕິບັດກິດຈະກຳຕໍ່ໄປ.**

### ການຝຶກອົບຮົມແມ່ນກ່ຽວກັບຫຍັງ?

ຈະມີ 2 ຊຸດການອົບຮົມທີ່ເປັນສ່ວນໜຶ່ງ ໃນການສະໜັບສະໜູນໃຫ້ກັບສະມາຊິກຂອງ SUN-CSA.

**ການອົບຮົມເຄື່ອງມືໂພຊະນາການ:** ການອົບຮົມຊຸດທຳອິດຈະແມ່ນກ່ຽວກັບເຄື່ອງມືໂພຊະນາການທີ່ຈະໄດ້ເອົາໄປນຳໃຊ້ໂດຍສະມາຄົມຕ່າງໆ ເພື່ອປັບປຸງທັກສະຄວາມສາມາດຂອງຊຸມຊົນດ້ານໂພຊະນາການລວມທັງໜ່ວຍງານດ້ານສະທາລະນະສຸກ ແລະ ກະສິກຳ.

**ການອົບຮົມການຂຽນບົດສະເໜີໂຄງການ:** ຈະເປັນການອົບຮົມທີ່ເຈາະຈົງກ່ຽວກັບການຂຽນບົດສະເໜີທີ່ກ່ຽວຂ້ອງກັບກິດຈະກຳໂພຊະນາການ ແລະ ຈະເປັນການຝຶກການຂຽນທີ່ເນັ້ນໃສ່ ການສະເໜີຂໍທຶນຂະໜາດນ້ອຍຈາກໂຄງການນີ້.

**ຂໍ້ສັງເກດ:** ເພື່ອເຂົ້າຮ່ວການຝຶກອົບຮົມການຂຽນບົດສະເໜີໂຄງການ ສະມາຄົມຂອງທ່ານຕ້ອງໄດ້ເຂົ້າຮ່ວມການອົບຮົມເຄື່ອງມືໂພຊະນາການກ່ອນ.

ຄ່າໃຊ້ຈ່າຍໃນສອງຊຸດອົບຮົມດັ່ງກ່າວ ແມ່ນຈະຢູ່ໃນຄວາມຮັບຜິດຊອບຂອງ SUN-CSA ທີ່ໄດ້ຮັບທຶນສະໜັບສະໜູນຈາກສະຫະພາບ ເອີຣົບ ແລະ ອົງການແພລນສາກົນ.

### ການສະໜອງທຶນດ້ານໂພຊະນາການແມ່ນເພື່ອຫຍັງ?

ທຶນດ້ານໂພຊະນາການແມ່ນ ເພື່ອສະໜອງໃຫ້ສະມາຄົມໃນການຈັດຕັ້ງປະຕິບັດກິດຈະກຳ ໂດຍນຳໃຊ້ເຄື່ອງມືໂພຊະນາການ ທີ່ໄດ້ຮັບການຝຶກອົບຮົມລົງໄປຈັດຕັ້ງປະຕິບັດ ໃນຂັ້ນຊຸມຊົນຂອງຕົນ. ກິດຈະກຳສາມາດກວມເອົາຂະແໜງງານຕ່າງໆທີ່ກ່ຽວຂ້ອງກັບໂພຊະນາການ ເຊັ່ນ: ກະສິກຳ, ສາທາລະນະສຸກ ແລະ ສຶກສາ. ກິດຈະກຳ ຕ້ອງໄດ້ຈັດຕັ້ງປະຕິບັດ ຮ່ວມກັບ ອົງການຈັດຕັ້ງພາກລັດຂັ້ນທ້ອງຖິ່ນ ແລະ ນຳໃຊ້ເຄື່ອງມືທີ່ໄດ້ອົບຮົມມາ ເພື່ອຊຸກຍູ້ເປົ້າໝາຍຍຸດທະສາດແຫ່ງຊາດ ດ້ານໂພຊະນາການ ແລະ 22 ມາດຕະການບູລິມະສິດ.

### ໃຜສາມາດສະໝັກເຂົ້າຮ່ວມໄດ້?

ການສະໜອງທຶນນີ້ແມ່ນແນໃສ່ ສະມາຄົມທີ່ເຮັດວຽກທັງທາງກົງ ແລະທາງອ້ອມ ທີ່ກ່ຽວພັນກັບໂພຊະນາການ ແລະສະມາຄົມຂອງທ່ານຕ້ອງເປັນສະມາຊິກຂອງ SUN-CSA. ໃນກໍລະນີທີ່ທ່ານຍັງບໍ່ທັນໄດ້ເປັນສະມາຊິກເທື່ອ, ທ່ານສາມາດສະໝັກເປັນສະມາຊິກແບບອອນໄລໄດ້ທີ່ນີ້: **www.suncsalaos.org/lo/** ຫຼື ສົ່ງອີເມລເພື່ອຂໍຂໍ້ມູນເພີ່ມຕື່ມໄດ້ທີ່: **info@suncsalaos.org**

### ສະມາຄົມຈະສະໝັກໄດ້ແນວໃດ?

ເພື່ອສະໝັກເຂົ້າຮ່ວມການອົບຮົມ ສະມາຄົມຂອງທ່ານຕ້ອງໄດ້ຍື່ນໃບສະມັກທີ່ຂັດມາພ້ອມນີ້ ສົ່ງໃຫ້ກັບ SUN-CSA **ກ່ອນວັນທີ 30 ມັງກອນ 2018**. ສະເພາະສະມາຄົມທີ່ເຂົ້າຮ່ວມການອົບຮົມທັງສອງຊຸດເທົ່ານັ້ນຈຶ່ງຈະມີສິດສະເໜີຂໍຮັບທຶນຂະໜາດນ້ອຍນີ້ໄດ້ ຊຶ່ງຈະປ່ອຍທຶນໃນເດືອນ ພຶດສະພາ 2018.

**ຖ້າທ່ານຕ້ອງການຂໍ້ມູນເພີ່ມຕື່ມ ກະລຸນາຕິດຕໍ່ SUN-CSA ອີເມລທີ່** info@suncsalaos.org ຫຼື ໂທ 021 353 409 – ຕໍ່ 109